# ຜົນກະທົບຂອງປະລິມານເງິນ, ເງິນເຟີ້ ຕໍ່ການຂະຫຍາຍຕົວທາງເສດຖະກິດ ຂອງ ສປປ ລາວ

**ຜູ້ຂຽນ: ຕຸນີ່ ວິພົມມະວົງສາ[1], ຄຳນວນ ອ່ອນລີໄຊ, ວິລະນີ ດວງແກ້ວ**

*[1]ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

*[1]**ຜູ້ຮັບຜິດຊອບ:** ຕຸນີ່ ວິພົມມະວົງສາ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ການສຶກສາໃນຄັ້ງນີ້ ແມ່ນດຳເນີນພາຍໃຕ້ຫົວຂໍ້ ສຶກສາຜົນກະທົບຂອງປະລິມານເງິນ, ເງິນເຟີ້ ຕໍ່ກັບການຂະຫຍາຍຕົວທາງເສດຖະກິດ ຂອງ ສປປ ລາວ ເຊິ່ງຈຸດປະສົງຂອງການສຶກສາແມ່ນສຶກສາຜົນກະທົບຂອງປະລິມານເງິນ , ເງິນເຟີ້ ຕໍ່ການຂະຫຍາຍຕົວທາງເສດຖະກິດຂອງ ສປປ ລາວ. ໂດຍນຳໃຊ້ຂໍ້ມູນແບບອະນຸກົມເວລາ) Time series) ເປັນຂໍ້ມູນລາຍປີ ເລີ່ມແຕ່ປີ 1991 – 2023 ລວມ 33 ປີ ຈາກທະນາຄານແຫ່ງ ສປປ ລາວ ແລະ ສູນສະຖິຕິແຫ່ງຊາດ ເຊິ່ງໃນການວິໄຈຄັ້ງນີ້ແມ່ນໄດ້ນຳໃຊ້ໂປຣແກຣມ Stata ເປັນເຄື່ອງມືໃນການທົດສອບຄວາມສຳພັນລະ ຫວ່າງຕົວປ່ຽນໃນແບບຈຳລອງ ໂດຍເລີ່ມການທົດສອບສະຖິຕິເຊີງພັນລະນາ, ທົດສອບຄວາມສຳພັນລະຫວ່າງຕົວປ່ຽນອິດສະຫລະ ແລະ ຕົວປ່ຽນຕາມດ້ວຍກັນ, ທົບສອບຄວາມສະເຖ່ຍຂອງຂໍ້ມູນ ດ້ວຍວິທີ Augmented Dickey-Fuller Test, ທົດສອບຄວາມລ່າຊ້າຂອງເວລາທີ່ເໝາະສົມ (Optimal Lag), ທົດສອບຄວາມສຳພັນໃນໄລຍະຍາວ (Cointegration Test), ພ້ອມທັງວິເຄາະປະຕິກິລິຍາຕອບສະໜອງ )Impulse Response Function) ແລະ ທົດສອບຄວາມສະເຖ່ຍຂອງແບບຈຳລອງ ດ້ວຍວິທີ CUSUM ແລະ CUSUMSQ.

ຜົນການສຶກສາພົບວ່າ ອັດຕາການຂະຫຍາຍຕົວທາງເສດຖະກິດຂອງ ສປປ ລາວ ມີຄວາມສຳພັນກັບປະລິ ມານເງິນ (M2) ແລະ ອັດຕາເງິນເຟີ້ (INF) ໃນທິດທາງກົງກັນຂ້າມກັນ ຕາມສົມມຸດຕິຖານທີ່ຕັ້ງໄວ້ ໂດຍທີ່ຖ້າຫາກປະລິມານເງິນ (M2) ເພີ່ມຂຶ້ນ 1% ຈະສົ່ງຜົນເຮັດໃຫ້ ອັດຕາການຂະຫຍາຍຕົວທາງເສດຖະກິດຂອງ ສປປ ລາວ ຫລຸດລົງ 1.11%. ແລະ ຖ້າຫາກອັດຕາເງິນເຟີ້ (INF) ເພີ່ມຂຶ້ນ 1% ຈະສົ່ງຜົນເຮັດໃຫ້ ອັດຕາການຂະຫຍາຍ ຕົວທາງເສດຖະກິດຂອງ ສປປ ລາວ ຫລຸດລົງ 11.75% ດ້ວຍລະດັບຄວາມສຳຄັນທາງສະຖິຕິ 99%. ເຖິງຢ່າງໃດກໍ່ຕາມການສຶກສາຄັ້ງນີ້ພົບວ່າການຂະຫຍາຍຕົວຂອງປະລິມານເງິນ (M2) ແລະ ອັດຕາເງິນເຟີ້ (INF) ສົ່ງຜົນເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຫລຸດລົງ (ຊ້າລົງ) ກໍ່ຈິງ ແຕ່ຈາກຜົນການທົດສອບແມ່ນບໍ່ມີການພົວພັນກັນໃນໄລ ຍະຍາວ ແລະ ຈາກຜົນການທົດສອບຄວາມສະເຖ່ຍຂອງແບບຈຳລອງ ດ້ວຍວິທີ CUSUM ແລະ CUSUMSQ ພົບວ່າແບບຈຳລອງທີ່ໃຊ້ໃນການສຶກສາມີຄວາມສະເຖ່ຍໃນຊ່ວງເວລາທີ່ສຶກສາ.

**ຄຳສຳຄັນ:** ອັດຕາເງິນເຟີ້, ປະລິມານເງິນ (M2) ແລະ ການຂະຫຍາຍຕົວທາງເສດຖະກິດຂອງ ສປປ ລາວ.

# The Effect of Money Supply Inflation on Lao's PDR Economic Growth

This study is conducted under the title of studying the effects of money supply and inflation on the economic growth of Lao PDR. The purpose of the study is to study the effects of money supply and inflation on the economic growth of Lao PDR. Using time series data from 1991 to 2023 including 33 years from the Bank of Lao PDR and the National Statistics Center, in this study Stata was used as a tool to test the relationship between the variables in the model by starting the descriptive statistics test, testing the relationship between the independent variables and the dependent variables, checking the average of the data using the Augmented Dickey-Fuller Test, and testing the delay of the appropriate time al Lag), long-term correlation test (Cointegration Test), Also analyze the response reaction (Impulse Response Function), test the accuracy of the model with the CUSUM and CUSUMSQ methods.

The results of the study found that the economic growth rate of the Lao PDR has a relationship with the money supply (M2) and the inflation rate (INF) in the opposite direction according to the hypothesis. If the money supply (M2) increases by 1%, it will cause the economic growth rate of Lao PDR to decrease by 1.11% and if the inflation rate (INF) increases by 1%, it will result in a decrease in the economic growth rate of the Lao PDR by 11.75% with a statistical significance of 99%. However, this study found that money supply (M2) and the inflation rate (INF) resulted in the economic growth rate of Lao PDR decreasing (slowing down), but from the test results, there is no relationship in the long run. test the accuracy of the model with the CUSUM and CUSUMSQ methods It was found that the model used in the study was stable during the study period.

**Keywords**: Inflation money supply (M2) and Economic growth rate of the Lao PDR.